# ໄຂລະຫັດສຽວສະຫວາດ :

# ຊີ້ນບໍ່ຂາດບໍ່ໃຫ້ຖາຍາ



ໂຮມບົດກະວີຂອງ

ຜຸຍ ກິດຕິ



Whisney Houston

# ກະວີ

# ໄຊລະຫັດສຽວສະຫວາດ

# ຊື່ນບໍ່ຂາດບໍ່ໃຫ້ ດູາຍາ

ໂຮມບົດກະວີຂອງ

ພຸຍ ກິດຕິ

ບຸນທະນອງ ຊິມໄຊຜົນ: ຮູບພາບປະກອບ

**D.K ART : Graphic computer**

ພິຜັດ ພະເມືອງ : ອອກແບບ

ພູມະລິນ ຊິມໄຊຜົນ : ຕີພິມ-ຈັດຫນ້າ

ພິມຄັ້ງທຳອິດ : ເດືອນ ພະຈິກ ໒໐໐໔

ຈຳນວນ : ໑໕໐໐ ເຫລັ້ມ

ພິມທີ່ : ສີສະຫວາດການພິມ

ຜູ້ອຸປະຖຳ : ໂຄງການສົ່ງເສີມກະສິກຳ

Supported by Laos Extension for Agriculture Project



# ສາລະບານ


** ຈາກໃຈຈິງຂອງຜູ້ຂຽນ ໐໑
໑ ມື້ໃໝ່ (ແທນຄຳນຳຜູ້ແຕ່ງ) ໐໓
໒ ບໍ່ຢາກໄດ້ໜ້າ ບໍ່ຫວັງວ່າຊິເອົາເງິນ ໐໕
໓ ໄຂລະຫັດສຽວສະຫວາດ ໐໗
໔ ຊື້ບໍ່ຂາດ ບໍ່ໃຫ້ຄຸງຂຽງ ໐໙
໕ ແດ່ພັກ ໑໑
໖ ຂໍເດີນຕາມ ໑໓
໗ ມູບເຊື້ອ ໑໗
໘ ສິດຕ້ອງໃຊ້ ໑໙
໙ ຈ.ມຈາກແນວໜ້າ ໒໑
໑໐ ແຜ່ນແທນກາຍ ໒໕
໑໑ ບ້ອງຢູ່ໃສ ໒໙
໑໒ ປີ້ງໄກ່ບາປີ່ງ ໓໓
໑໓ ຫລິ້ນ ໓໕
໑໔ ຢາບ້າ-ຄົບໝາ ໓໙
໑໕ ບົດບາດຍິງ-ຊາຍ ໔໑
໑໖ ສອນນາງ ໔໕
໑໗ ຫລານສອນປູ່ ໔໙
໑໘ ໜ່ອອ່ນ ເດັກຊອບ ໕໑
໑໙ ໝາຈອກ ໕໓
໒໐ ໜ້າກາກ ໕໕
໒໑ ແຄມຂອງຍາມແລງ ໕໙
໒໒ ແຜນລ້າ-ແຜນການ ໖໑
໒໓ ສັດຈະນິກກະຈອກ ໖໓
໒໔ ຊ່ອຍຕອບແນ່ ໖໕
໒໕ ທຳດ້ວຍໄມ້ປ່ອງ ໖໙

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*********

ແຂວງສາລະວັນ

ພະແນກຖະແຫລງຂ່າວ

ແລະວັດທະນະທຳ

ເລກທີ 1028 / ຖວຂ

ລົງວັນທີ 10/11/2004

## ບົດຄຳເຫັນ:

## ຕໍ່ກັບການພິມປຶ້ມໂຮມບົດກາວີ

## ຂອງ ທ່ານ ຄຳພຸຍ ກິດຕິ

ຂ້າພະເຈົ້າ, ຫົວໜ້າພະແນກຖະແຫລງຂ່າວແລະວັດທະນະທຳແຂວງສາລະວັນ,ຂໍສະແດງຄວາມສັນລະເສີນຕໍ່ຄວາມພະຍາຍາມຂອງທ່ານ ຄຳພຸຍ ກິດຕິ ທີ່ໄດ້ໃຊ້ເວລາຫວ່າງເພື່ອມາຄິດແຕ່ງແລະທ້ອນໂຮມບົດກາວີຂອງ ທ່ານ ເຂົ້າເປັນປຶ້ມເພື່ອສະໜອງໃຫ້ແກ່ຄວາມຕ້ອງການຂອງສັງຄົມ,ປະຈຸບັນພັກແລະລັດຖະບານຂອງພວກເຮົາໄດ້ຮຽກຮ້ອງມາຍັງທຸກທ້ອງຖິ່ນໃຫ້ເອົາໃຈໃສ່ຕໍ່ການສົ່ງເສີມນັກປະດິດຄິດແຕ່ງຕ່າງໆ,ດ້ວຍການສົ່ງເສີມຫົວຄິດປະດິດສ້າງ,ສະຕິປັນຍາ,ຄວາມຮູ້,ຄວາມສາມາດຂອງເຂົາເຈົ້າເພື່ອປະກອບສ່ວນອັນສຳຄັນເຂົ້າໃນພາລະກິດວັດທະນະທຳຂອງຊາດຢ່າງກວ້າງຂວາງ.

ການພິມປຶ້ມໂຮມບົດກາວີຂອງທ່ານ ຄຳພຸຍ ກິດຕິ ໃນຄັ້ງນີ້ແມ່ນໄດ້ປະກອບສ່ວນອັນສຳຄັນເຂົ້າໃນການເພີ້ມສິ່ງພິມຂອງທ້ອງຖິ່ນແລະຂອງຊາດໃຫ້ນັບມື້ນັບຫຼາຍເພື່ອຕອບສະໜອງດ້ານການອ່ານ,ການສຶກສາຫາຄວາມຮູ້ທີ່ນຳຜົນປະໂຫຍດມາສູ່ຄົນເຮົາ,ເຮັດໃຫ້ຄົນເຮົາມີຄວາມສາມາດເບິ່ງບັນຫາຂອງສະພາບແວດລ້ອມຫລືຂອງໂລກອ້ອມຕົວໄດ້ຢ່າງຖືກຕ້ອງ,ທັງເສີມສ້າງໃຫ້ຄົນເຮົາມີອະລິຍະທຳທີ່ດີງາມ,ຮູ້ສະຫງວນຮັກຄວາມງາມ ແລະຮູ້ສະແຫວງຫາຄວາມງາມມາສູ່ປະເທດຊາດເພື່ອຄວາມວັດທະນາຖາວອນຂອງປະເທດຊາດໃນອະນາຄົດ.

ດ້ານໜຶ່ງຜູ້ອ່ານໄດ້ຜ່ອນຄາຍອາລົມທີ່ອິດອ່ອນຈາກການອອກແຮງງານດ້ວຍມັນສະໝອງແລະດ້ວຍຕີນມືເພື່ອສຸຂະພາບແລະຄວາມມີອາຍຸຍືນ,ພ້ອມນັ້ນບົດກາວີ, ບົດເລື່ອງຕ່າງໆສ່ວນໃຫ່ຍຍັງແມ່ນຄວາມຈິງ,ວິທະຍາສາດແລະສັດຈະທຳ ຊຶ່ງເປັນບໍ່ເກີດຂອງຜົນສຳເລັດໃນການເຄື່ອນໄຫວຮອບດ້ານຂອງຄົນເຮົາ.

ສະນັ້ນ, ຂ້າພະເຈົ້າສະເໜີມາຍັງທ່ານຜູ້ອ່ານທຸກໆທ່ານຈົ່ງຊ່ວຍຊີ້ແນະນຳໃຫ້ຄຳຄິດຄຳເຫັນເພີ້ມເຕີມຕໍ່ແຕ່ລະບົດ ເພື່ອໃຫ້ມັນນັບມື້ອຸດົມສົມບູນໄປດ້ວຍເນື້ອໃນແລະວິນຍານທີ່ມີຊີວິດຊີວາຂອງບົດກາວີຕ່າງໆເລົ່ານີ້

ດ້ວຍຄວາມນັບຖືແລະຮັກແພງ

ຫົວໜ້າພະແນກ

ຖະແຫລງຂ່າວແລະວັດທະນະທຳແຂວງສາລະວັນ

ຄຳມີ ໂຄດປັນຍາ

Khamony KHOTPANYA



# ຈາກໃຈຈິງຂອງຜູ້ຂຽນ

ດັ່ງທີ່ໄດ້ຖະແຫລງໄວ້ແລ້ວຂ້າພະເຈົ້າໄດ້ສ້າງສັນງານນີ້ຂຶ້ນມາບໍ່ໄດ້ຄິດເລື່ອງອື່ນນອກຈາກຢາກໃຫ້ຄົນຮຸ່ນຫລັງຮູ້ຄຸນຄ່າຄວາມດີງາມຂອງສິນລະປະວັດທະນະທຳລາວ.

ນອກຈາກນັ້ນແລ້ວບິດາອນບິດາກະວີຕ່າງໆຂ້າພະເຈົ້າພາກພຽນພະຍາຍາມຂຽນມາຫລາຍປີດ້ວຍຄວາມມຸ່ງຫວັງຢ່າງດຽວຄືຢາກໃຫ້ຄົນທົ່ວໄປໄດ້ຮັບຂ່າວສານ, ໄດ້ອ່ານ, ໄດ້ຮັບຮູ້ສ່ວນທີ່ດີງາມຂອງປຶ້ມຫົວນີ້, ຢ່າງນ້ອຍກໍ່ເປັນເພື່ອນຊ່ວຍຄິດເປັນທີ່ປຶກສາໃນການຕໍ່ສູ້ເພື່ອຄວາມເປັນຢູ່ໃຫ້ດີຍິ່ງໆຂຶ້ນໄປ.

ຈາກເຈດຕະນາລົມທີ່ຕັ້ງໄວ້ແລ້ວນັ້ນ ຂ້າພະເຈົ້າຍັງໂຊກດີທີ່ມີອົງການ, ມີໂຄງການເຊິ່ງເຮັດວຽກຢ່າງຕັ້ງໜ້າເພື່ອຟື້ນຟູແລະຍູ້ໜູນຊາວບ້ານໃນການປັບປຸງແກ້ໄຂຊີວິດການເປັນຢູ່ແບບຍືນຍົງເຖິງແມ່ນຈະໃຊ້ພາຫະນະວິທີການທີ່ແຕກຕ່າງແຕ່ກໍມີເປົ້າໝາຍອັນດຽວກັນ... ນະໂອກາດນີ້ຂ້າພະເຈົ້າໃນຖານະຜູ້ຂຽນປຶ້ມເຫລັ້ມນີ້ຂໍຂອບໃຈແລະຊາບຊຶ້ງໃນນ້ຳໃຈຂອງໂຄງການ LEAP ຊຶ່ງຊ່ວຍໃຫ້ປຶ້ມເຫລັ້ມນີ້ໄດ້ອອກສູ່ສາຍຕາມະຫາຊົນສ້າງໂອກາດໃຫ້ຜູ້ຂຽນໄດ້ລະບາຍຄວາມຮູ້ສຶກນຶກຄິດຊຶ່ງບໍ່ຫລາຍກໍ່ໜ້ອຍຄົງເປັນປະໂຫຍດແກ່ສັງຄົມ.

ຄົງເຊໂດນ, ວັນທີ 10.11.04

ຜຸຍ ກິດຕິ .





# ມືໃໝ່

( ແທນຄຳນຳຜູ້ແຕ່ງ )

ບານໜໍ່ຂ້ອຍ  ພໍ່ໃສ່ຊື່ຄຳຜຸຍ
ບານສະກຸນກິດຕິ  ທີ່ຄົນບໍ່ທັນຮູ້
ລາດລັງສີແຖມທ້າຍ  ສະກຸນເດີມແຕ່ຄາວປູ່
ເກີດຢູ່ແຄວ້ນເຂດໃຕ້  ຄາເມກໍ້າທ່າງເມືອງ
ເລື່ອງວິຊາສາດປູ້  ບໍ່ສູງສົ່ງຄືຄົນກຸງ
ມຸ່ງມາດໃຈຈົ່ງຈິດ  ຢາກລະບາຍອາລົມໄວ້
ມືໃໝ່ຂຽນກະວີອ້ອນ  ເປັນກະເວກະວາດ
ບໍ່ສະຫລາດປາດເປື້ອງ  ແຕ່ໃຈຈ້າວຈູບຢາກຂຽນ
ລິຂິດຄວາມບໍ່ຄ່ອງແຄ້ວ  ຄືແນວໜໍ່ປາງຄຳ
ສຳນວນບໍ່ໄພເລາະ  ກ່າຍເກາະກອນກ້ຽວ
ກວ່າແຕ່ຝູງຄົນຮູ້  ຊານໄຊບັກປາດ
ອາດຊ່ວຍຊູຜູ້ນ້ອຍ  ໃຫ້ຫຽມເທົ້າທ່ານອາຈານ



ຫ້າມຈຳໜ່າຍ



# ບໍ່ຢາກໄດ້ຫນ້າ
# ບໍ່ຫວັງວ່າຊິເອົາເງິນ

ຂ້າຂໍຂຽນຕໍ່ເລື່ອງ　ກອນກາບກະວີສິນ
ຊີ້ຊັກຊວນຊຸມຊົນ　ອ່ານກະວີຊາວບ້ານ
ກອນກາບຄຳໂຄງເຄົ້າ　ມູນມັງແຕ່ເປີງປູ່
ເປີງປາງຄຳປາດເປື້ອງ　ສະໄຫມເຟື້ອງຮຸ່ງສີ
ເປີງສຸລິຍະວົງສາທິລາດເຈົ້າ　ຖະເຫລີງລາດບັນລັງ
ວັນນະກຳກະວີສິນ　ພຸ່ງກະແສພຽງຟ້າ
ມະຫາສິລາຮຽງຮ້ອຍ　ເປັນຕຳນານສານຕໍ່
ພໍໃຫ້ຄົນຮຸ່ນຫລ້າ　ຂະຫຍາຍເຊື້ອສືບມູນ
ຄວນແກ່ຂຽນຂີດວາດ　ເຕີມແຕ່ງຕາມຮອຍ
ຮຽນຮຽງຮອຍພາສາ　ບໍ່ເສື່ອມສີສູນເສົ້າ
ເຈຍລະໄນຄະຕິໂລກ　ຄະຕິທຳບໍ່ໃຫ້ຫລ່າ
ໄຮ້ພາສາກໍ່ຄືຄົນໄຮ້ຊາດ　ຕະກູນເຊື້ອເກີດບໍ່ມີ
ງານນີ້ ຂ້ອຍບໍ່ຢາກໄດ້ຫນ້າ　ບໍ່ຫວັງວ່າຊິເອົາເງິນ
ຫວັງເຊີນຊວນຊາວລາວ　ສືບສານກະວີໄວ້
ສືບໄວ້ຄອງປະດັບເອ້　ອຸທະຍານອັກສອນສາດ
ຄວາມມຸ່ງມາດຜູ້ຂ້າ　ພຽງນີ້ກໍ່ອຸ່ນໃຈ ທ່ານເອີຍ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນໍາ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ